# ການໄດ້ຮັບການສັກຢາວັກຊີນ ສໍາລັບພະຍາດ ໂຄວິດ-19

Vaccinate WA
CovidVaccineWA.org

ການຕໍ່ສູ້ກັບພະຍາດລະບາດນີ້ແມ່ນລໍາບາກຫຼາຍ, ແຕ່ດຽວນີ້ພວກເຮົາມີຢາວັກຊີນຫຼາຍຊະນິດເພື່ອປ້ອງກັນພວກເຮົາຈາກພະຍາດ ໂຄວິດ-19.

## ຢາວັກຊີນເອົາໃຫ້ທ່ານລ້ອນແຕ່ບໍ່ໄດ້ເສຍຄ່າ.

ລັດຖະບານກາງຈະຮັບຜິດຊອບຄ່າໃຊ້ຈ່າຍກ່ຽວກັບຢາວັກຊີນຂອງທ່ານ. ຜູ້ໃຫ້ບໍລິການອາດຄິດຄ່າທໍານຽມໃນການໃຫ້ຢາວັກຊີນແຕ່ວ່າບໍລິສັດປະກັນໄພສຸຂະພາບຈະຄຸ້ມກັນມັນໃຫ້. ຜູ້ໃຫ້ບໍລິການຈະຍົກເວັ້ນຄ່າທໍານຽມຖ້າທ່ານບໍ່ສາມາດຈ່າຍໄດ້.

## ຖາມເບິ່ງວ່າທ່ານຕ້ອງສັກຈັກຄັ້ງ.

ທ່ານຈະໄດ້ຮັບວັກຊີນສອງຄັ້ງສໍາລັບວັກຊີນບາງຊະນິດ, ໂດຍຫ່າງກັນສາມຫາສີ່ອາທິດ. ວັກຊີນຊະນິດອື່ນແມ່ນພຽງເຂັມດຽວ. ທ່ານອາດຈະຈໍາເປັນຕ້ອງໄດ້ຮັບເຂັມກະຕຸ້ນພາຍໃນສອງຫາຫົກເດືອນຕໍ່ມາ.

## ຢາວັກຊີນແມ່ນປອດໄພ ແລະ ມີປະສິດຕິຜົນດີ.

ວັກຊີນທຸກປະເພດແມ່ນໄດ້ຮັບການອະນຸມັດ ຫຼື ອະນຸຍາດໃຫ້ນໍາໃຊ້ໃນກໍລະນີສຸກເສີນໂດຍ U.S. Food and Drug Administration,(FDA, ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ)—ໝາຍຄວາມວ່າ FDA ບໍ່ພົບບັນຫາທີ່ຮ້າຍແຮງກ່ຽວກັບຄວາມປອດໄພ.

## 5+ ທຸກຄົນທີ່ມີອາຍຸ 5 ປີ ແລະ ສູງກ່ວານັ້ນ ສາມາດໄດ້ຮັບການສັກຢາວັກຊີນ.

ຢາວັກຊີນ ໂຄວິດ-19 ມີໄວ້ສໍາລັບທຸກຄົນອາຍຸ 5 ປີ ແລະ ສູງກ່ວານັ້ນ. ຜູ້ທີ່ມີອາຍຸ 5 ຫາ 17 ປີ ສາມາດໄດ້ຮັບຢາວັກຊີນ Pfizer-BioNTech ເທົ່ານັ້ນ. ເຂົ້າເບິ່ງ VaccineLocator.doh.wa.gov ເພື່ອຊອກຫາ ແລະ ຈັດຕາຕະລາງນັດໝາຍ. ທ່ານຍັງສາມາດໂທຫາເບີ 1-800-525-0127, ຈາກນັ້ນກົດ #. ສໍາລັບການບໍລິການແປພາສາ, ໃຫ້ເວົ້າພາສາຂອງທ່ານເມື່ອຮັບໂທລະສັບແລ້ວ.

## ບາງທີທ່ານອາດຈະຮູ້ສຶກວ່າມີຜົນຂ້າງຄຽງ.

ເຊັ່ນດຽວກັນກັບຢາວັກຊີນແບບປົກກະຕິອື່ນໆ, ທ່ານອາດຈະເຈັບແຂນ, ໄຂ້, ເຈັບຫົວ ຫຼື ອ່ອນເພຍຫລັງຈາກໄດ້ສັກຢາວັກຊີນແລ້ວ. ນີ້ແມ່ນອາການທີ່ວ່າຢາວັກຊີນກໍາລັງເຮັດວຽກຢູ່.

## ຢູ່ຢ່າງປອດໄພ.

ຫຼັງຈາກທີ່ທ່ານໄດ້ຮັບຢາວັກຊີນແລ້ວ, ໃສ່ໜ້າກາກຂອງທ່ານ, ຢູ່ຫ່າງກັນປະມານຫົກຟຸດ (ສອງແມັດ) ແລະ ຮັກສາການຢູ່ຮ່ວມກັນໃຫ້ເປັນຂະໜາດນ້ອຍ.

# ການໄດ້ຮັບການສັກຢາວັກຊີນສຳລັບພະຍາດ ໂຄວິດ-19

## ມີຢາວັກຊີນຫຍັງແດ່?

ມັນມີຫຼາຍປະເພດຢາວັກຊີນທີ່ມີຄື.

ວັກຊີນທຸກປະເພດແມ່ນໄດ້ຮັບການອະນຸມັດ ຫຼື ອະນຸຍາດໃຫ້ນຳໃຊ້ໃນກໍລະນີສຸກເສີນໂດຍ U.S. Food and Drug Administration (FDA, ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ)—ໝາຍຄວາມວ່າ FDA ບໍ່ພົບບັນຫາທີ່ຮ້າຍແຮງກ່ຽວກັບຄວາມປອດໄພ.

## ຜູ້ໃດຄວນໄດ້ຮັບຢາວັກຊີນໂຄວິດ-19?

ມັນຈະເປັນທາງເລືອກຂອງທ່ານທີ່ຈະໄດ້ຮັບວັກຊີນ. ຖ້າທ່ານຕັດສິນໃຈຮັບເອົາມັນ, ທ່ານຄວນບອກຜູ້ໃຫ້ບໍລິການວັກຊີນຂອງທ່ານຖ້າທ່ານ:

- ເຄີຍມີປະຫວັດຂອງອາການແພ້ທີ່ຮຸນແຮງ
- ມີໄຂ້
- ມີໂຣກເລືອດອອກ ຫຼື ກິນຢາເຮັດໃຫ້ເລືອດຈາງ
- ມີພູມຄຸ້ມກັນບົກພ່ອງ ຫຼື ກຳໃຊ້ຢາທີ່ມີຜົນຕໍ່ລະບົບພູມຄຸ້ມກັນຂອງທ່ານ
- ຖືພາ, ວາງແຜນທີ່ຈະຖືພາ, ຫຼື ກຳລັງໃຫ້ນົມລູກ
- ໄດ້ຮັບຢາວັກຊີນໂຄວິດ-19 ປະເພດອື່ນແລ້ວ

ທ່ານບໍ່ຄວນສັກຢາວັກຊີນນີ້ຖ້າທ່ານມີອາການແພ້ທີ່ຮຸນແຮງຕໍ່ການສັກຢາວັກຊີນໂຄວິດ-19 ຄັ້ງຜ່ານມາ ຫຼື ສ່ວນປະກອບໃດໆໃນຢາວັກຊີນ.

ຢາວັກຊີນບັນຈຸປະກອບດ້ວຍສານທີ່ມີການເຄື່ອນໄຫວເຊັ່ນ messenger RNA (mRNA) ຫຼື adenovirus, ພ້ອມດ້ວຍໄຂມັນ, ເກືອແຮ່ ແລະ ນ້ຳຕານເພື່ອປ້ອງກັນ mRNA ແລະ ຊ່ວຍໃຫ້ມັນເຮັດວຽກໄດ້ດີຂຶ້ນໃນຮ່າງກາຍ.

ທ່ານຕ້ອງມີອາຍຸຢ່າງໜ້ອຍ 5 ປີຈຶ່ງໄດ້ຮັບຢາວັກຊີນ Pfizer-BioNTech ແລະ ອາຍຸ 18 ປີຈຶ່ງໄດ້ຮັບວັກຊີນ Moderna ຫຼື Johnson & Johnson.

## ມີຜົນຂ້າງຄຽງແມ່ນຫຍັງບໍ?

ມັນເປັນເລື່ອງທຳມະດາທີ່ຈະມີຜົນຂ້າງຄຽງໜຶ່ງ ຫຼື ສາມມື້ຫຼັງຈາກໄດ້ຮັບຢາວັກຊີນ. ຜົນຂ້າງຄຽງທີ່ພົບເລື້ອຍແມ່ນຄວາມອິດເມື່ອຍ, ເຈັບກ້າມ, ເຈັບໃນແຂນຂອງທ່ານບ່ອນທີ່ທ່ານໄດ້ຮັບການສັກຢາ, ໄຂ້, ເຈັບຫົວ, ອາການປວດຂໍ່ຕໍ່ກະດູກ, ໜາວ ສັ່ນ, ປວດຮາກ ຫຼື ຮາກ. ຖ້າອາການຂອງທ່ານບໍ່ຫາຍໄປ, ໃຫ້ຕິດຕໍ່ຫາທ່ານໝໍ ຫຼື ຄລີນິກຂອງທ່ານ.

ທ່ານຄວນລໍຖ້າ 15 ຫາ 30 ນາທີກ່ອນອອກຈາກສະຖານທີ່ສັກຢາວັກຊີນເພື່ອໃຫ້ຜູ້ໃຫ້ບໍລິການວັກຊີນສາມາດຊ່ວຍທ່ານໄດ້ຖ້າທ່ານມີອາການແພ້ ຫຼື ມີຜົນຂ້າງຄຽງອື່ນໆ. ໃນຂະນະທີ່ທ່ານລໍຖ້າ, ທ່ານສາມາດລົງທະບຽນສຳລັບ v-safe ເພື່ອລາຍງານຜົນຂ້າງຄຽງໃດໆ: vsafe.cdc.gov (ເປັນພາສາອັງກິດເທົ່ານັ້ນ).

ທ່ານ ຫຼື ຜູ້ໃຫ້ບໍລິການຢາວັກຊີນຂອງທ່ານຍັງສາມາດລາຍງານຜົນຂ້າງຄຽງຕໍ່ລະບົບລາຍງານເຫດການທີ່ບໍ່ດີກ່ຽວຂ້ອງກັບຢາວັກຊີນ (Vaccine Adverse Event Reporting System, VAERS): vaers.hhs.gov/reportevent.html (ເປັນພາສາອັງກິດເທົ່ານັ້ນ).

**ໂທ 911 ຖ້າທ່ານມີອາການແພ້ຫລັງຈາກອອກຈາກຄລີນິກ.** ອາການຂອງປະຕິກິລິຍາແພ້ຢາປະກອບມີ: ຫາຍໃຈຍາກ, ໃບໜ້າ ແລະ ຄໍບວມ, ຫົວໃຈເຕັ້ນໄວ, ເປັນຜື່ນທີ່ບໍ່ດີທົ່ວຮ່າງກາຍຂອງທ່ານ, ວິນຫົວ, ແລະ ອ່ອນເພຍ.

## ຈະເກີດຫຍັງຂຶ້ນຫລັງຈາກຂ້າພະເຈົ້າໄດ້ຮັບການສັກຢາວັກຊີນແລ້ວ?

**ຖ້າທ່ານຕ້ອງສັກສອງຄັ້ງ, ໃຫ້ເຮັດການນັດໝາຍສຳລັບການສັກຢາຄັ້ງທີສອງຂອງທ່ານ.** ທ່ານຈຳເປັນຕ້ອງກັບມາອີກພາຍໃນສາມຫາສີ່ອາທິດເພື່ອຈະໄດ້ຮັບຢາຄັ້ງທີສອງຂອງທ່ານ.

ມັນຈະໃຊ້ເວລາເຖິງສອງອາທິດຫລັງຈາກການສັກຢາຄົບແລ້ວທ່ານຈຶ່ງໄດ້ຮັບການປ້ອງກັນຢ່າງເຕັມທີ່. ນອກຈາກນີ້ແນະນຳໃຫ້ໄດ້ຮັບເຂັມກະຕຸ້ນພາຍໃນສອງຫາຫົກເດືອນເພື່ອສືບຕໍ່ໃຫ້ໄດ້ຮັບການປ້ອງກັນຕົນເອງ.



ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວ civil.rights@doh.wa.gov.